**ມິຊຊາອາທິດທີ 27 ການົດທຳມະດາປີ C**

**ວັນທີ 06 ຕຸລາ 2019**



**ພຣະວໍລະສານໂດຍນັກບຸນລູກາ 17, 5-10**

ໃນເວລານັ້ນ, ພວກອັກຄະສາວົກທູນພຣະເຢຊູເຈົ້າວ່າ: "ໂຜດໃຫ້ພວກຂ້ານ້ອຍມີຄວາມເຊື່ອທະວີຂື້ນເຖີດ". ພຣະອົງກ່າວຕອບວ່າ: "ຖ້າພວກເຈົ້າມີຄວາມເຊື່ອທໍ່ເມັດງາແລ້ວ ພວກເຈົ້າກໍອາດສັ່ງກັບກົກໄມ້ໃຫຍ່ນີ້ໄດ້ວ່າ: ຈົ່ງຖອນຮາກໄປປົ່ງຢູ່ກາງທະເລພຸ້ນ ມັນກໍຈະຟັງຄວາມພວກເຈົ້າ".

ມີໃຜໃນພວກເຈົ້າທີ່ມີຄົນໃຊ້ຜູ້ໜຶ່ງກຳລັງໄຖນາຫລືລ້ຽງສັດຢູ່. ເມື່ອເຫັນຄົນໃຊ້ນັ້ນຫລົບມາແຕ່ນາແລ້ວ ຈະບອກເຂົາວ່າ: "ໄວໆ, ມາກິນເຂົ້າ". ບໍ່ມີໃຜເວົ້າດັ່ງນີ້ດອກ, ແຕ່ຈະບອກຄົນໃຊ້ນັ້ນວ່າ: "ຈົ່ງຈັດຫາອາຫານມາໃຫ້ເຮົາ. ຈົ່ງມັດແອວຮັບໃຊ້ເຮົາຕະຫລອດເວລາທີ່ເຮົາກິນແລະດື່ມ. ເມື່ອເສັດແລ້ວເຈົ້າຈຶ່ງກິນແລະດື່ມຕາມຫລັງ".

ດັ່ງນີ້ຜູ້ເປັນນາຍຈະສຳແດງຄວາມຮູ້ບຸນຄຸນຕໍ່ຄົນໃຊ້ທີ່ໄດ້ປະຕິບັດຕາມຄຳສັ່ງຂອງຕົນບໍ? ບໍ່ແມ່ນດັ່ງນີ້ດອກ.

ສຳລັບພວກເຈົ້າກໍດັ່ງດຽວກັນ, ເມື່ອພວກເຈົ້າໄດ້ທຳທຸກຢ່າງຕາມຄຳສັ່ງແລ້ວ, ກໍໃຫ້ເວົ້າວ່າ: "ພວກເຮົາເປັນແຕ່ຄົນໃຊ້ຜູ້ບໍ່ມີປະໂຫຍດ, ຍ້ອນວ່າພວກເຮົາທຳຕາມໜ້າທີ່ຂອງຕົນເທົ່ານັ້ນ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 17, 5-10**

ວາຈາພຣະເຈົ້າວັນນີ້ເບິ່ງຄືສອງເລື່ອງທີ່ແຕກຕ່າງກັນຊຶ່ງຜູ້ຂຽນພຣະວໍລະສານໄດ້ເລົ່າຕໍ່ເນື່ອງກັນໃຫ້ພວກເຮົາຟັງ. ເລື່ອງທີໜຶ່ງຄືການສົນທະນາລະຫວ່າງພວກສາວົກກັບພຣະເຢຊູເຈົ້າກ່ຽວກັບການທຳໃຫ້ຄວາມເຊື່ອເພີ່ມທະວີຂຶ້ນໃນຕົວພວກເຂົາ. ແລະພຣະເຢຊູເຈົ້າກໍຕອບພວກເຂົາວ່າ: "ຖ້າພວກເຂົາມີຄວາມເຊື່ອທໍ່ເມັດງາແລ້ວ ພວກເຂົາກໍອາດສັ່ງກັບກົກໄມ້ໃຫຍ່ນີ້ໄດ້ວ່າ: ຈົ່ງຖອນຮາກໄປປົ່ງຢູ່ກາງທະເລພຸ້ນ ມັນກໍຈະຟັງຄວາມພວກເຂົາ". ໝາຍຄວາມວ່າແນວໃດ? ອາດຈະໝາຍຄວາມວ່າ ຄວາມເຊື່ອແມ່ນພຣະຄຸນທີ່ມາຈາກພຣະເຈົ້າສຳລັບຜູ້ທີ່ເຊື່ອໃນພຣະອົງ. ສ່ວນການທີ່ຄວາມເຊື່ອຈະຂະຫຍາຍຕົວຫລືບໍ່ ຈະມີຊີວິດຫລືຕາຍໄປນັ້ນບໍ່ໄດ້ຂຶ້ນກັບພຣະເຈົ້າ ແຕ່ຂຶ້ນກັບການກະທຳຂອງພວກເຮົາແຕ່ລະຄົນ. ຫລືເວົ້າອີກຢ່າງໜຶ່ງຖ້າພວກເຮົາຫາກມີຄວາມເຊື່ອແລ້ວ ທຸກສິ່ງກໍເປັນໄປໄດ້.

ສ່ວນເລື່ອງທີສອງໃນວາຈາພຣະເຈົ້າວັນນີ້ແມ່ນເລື່ອງຜູ້ຮັບໃຊ້ກັບນາຍ. ເບິ່ງຄືນາຍຜູ້ນີ້ບໍ່ມີຄວາມເມດຕາແລະຮູ້ບຸນຄຸນຕໍ່ຜູ້ຮັບໃຊ້ຂອງເຂົາປານໃດ? ສ່ວນຄົນຮັບໃຊ້ເຖິງວ່າເຂົາໄດ້ທຳທຸກສິ່ງຢ່າງທີ່ນາຍສັ່ງບອກ, ທ້າຍສຸດແລ້ວເຂົາກໍເປັນພຽງແຕ່ຄົນຮັບໃຊ້ທີ່ໄຮ້ປະໂຫຍດເທົ່ານັ້ນ. ພວກເຮົາຈະເຂົ້າໃຈວາຈາພຣະເຈົ້າຕອນນີ້ຢ່າງໃດ? ເປັນຫຍັງຜູ້ຂຽນພຣະວໍລະສານຈຶ່ງຂຽນສອງເລື່ອງນີ້ຕໍ່ເນື່ອງກັນ?

ຖ້າພວກເຮົາເຂົ້າໃຈຄວາມໝາຍເລື່ອງທີສອງກ່ຽວກັບຜູ້ຮັບໃຊ້ກັບນາຍເໝືອນກັບຄວາມໝາຍຂອງເລື່ອງທີໜຶ່ງກ່ຽວກັບຄວາມເຊື່ອທີ່ເປັນພຣະຄຸນມາຈາກພຣະເຈົ້າແລ້ວ, ພວກເຮົາຈະສາມາດເຂົ້າໃຈຈຸດປະສົງຂອງຜູ້ຂຽນພຣະວໍລະສານຕອນນີ້ໄດ້.

ການເປັນຜູ້ຮັບໃຊ້ກໍແມ່ນພຣະຄຸນຢ່າງໜຶ່ງເຊັ່ນດຽວກັນ. ຍ້ອນຜູ້ຮັບໃຊ້ໄດ້ຖືກເລືອກສັນແລະມອບພາລະກິດທີ່ສຳຄັນຈາກນາຍຂອງຕົນ. ເຖິງວ່າພາລະກິດນີ້ຈະໃຫຍ່ຫລືນ້ອຍກໍລ້ວນແຕ່ໄດ້ຖືກມອບໝາຍແລະສຳຄັນ. ເພາະສະນັ້ນ, ພາລະກິດທີ່ຖືກມອບໝາຍນັ້ນຈະສຳເລັດຫລືບໍ່ ບໍ່ໄດ້ຂຶ້ນກັບນາຍ, ແຕ່ຂຶ້ນກັບຜູ້ຮັບໃຊ້. ເຖິງວ່າຜູ້ຮັບໃຊ້ນັ້ນຈະຕ້ອງໃຊ້ໝົດເຫື່ອແຮງແລະຄວາມສາມາດຂອງຕົນ ແລະບາງຄັ້ງຕ້ອງໄດ້ສ່ຽງຊີວິດຍ້ອນພາລະກິດນັ້ນ, ແຕ່ທ້າຍສຸດແລ້ວຄົນຮັບໃຊ້ກໍມີແຕ່ທຳໃຫ້ສຳເລັດໜ້າທີ່ຂອງຕົນເທົ່ານັ້ນ. ດັ່ງທີ່ພຣະເຢຊູເຈົ້າກ່າວວັນນີ້ວ່າ: "ພວກເຮົາເປັນແຕ່ຄົນໃຊ້ຜູ້ໄຮ້ປະໂຫຍດ, ຍ້ອນວ່າພວກເຮົາທຳຕາມໜ້າທີ່ຂອງຕົນເທົ່ານັ້ນ". ແຕ່ສິ່ງສຳຄັນຢູ່ບ່ອນນີ້ຄື ຜູ້ເປັນນາຍບໍ່ໄດ້ປະຖິ້ມຜູ້ຮັບໃຊ້, ເຂົາຢູ່ຄຽງຂ້າງຜູ້ຮັບໃຊ້ຂອງເຂົາສະເໝີ. ຖ້າຜູ້ຮັບໃຊ້ໃນພຣະວໍລະສານວັນນີ້ແມ່ນພວກເຮົາແຕ່ລະຄົນທີ່ທຳຕາມໜ້າທີ່ຊຶ່ງໄດ້ຖືກມອບໝາຍເມື່ອເວລາພວກເຮົາຮັບສິນລ້າງບາບອັນແມ່ນຄວາມເຊື່ອແລ້ວ, ຜູ້ເປັນນາຍກໍຕ້ອງແມ່ນພຣະເຈົ້າທີ່ຢູ່ຄຽງຂ້າງພວກເຮົາສະເໝີ. ເຖິງວ່າບາງຄັ້ງຊີວິດຄວາມເຊື່ອຂອງພວກເຮົາຈະຄອນແຄນແລະຫັນເຫໄປໃນທາງບໍ່ຖືກຕ້ອງ ແຕ່ພຣະເຈົ້າກໍຍັງຢູ່ຄຽງຂ້າງພວກເຮົາສະເໝີ.

ຂໍໃຫ້ວາຈາພຣະເຈົ້າວັນນີ້ເປັນແສງສະວ່າງແລະກຳລັງໃຈສຳລັບພວກເຮົາແຕ່ລະຄົນບົນເສັ້ນທາງແຫ່ງຊີວິດຄວາມເຊື່ອຢູ່ບົນໂລກນີ້ ເພື່ອວັນໜຶ່ງພວກເຮົາຈະໄດ້ຮັບບຳເນັດລາງວັນຈາກພຣະເຈົ້າໃນໂລກໜ້າ ອັນແມ່ນອານາຈັກຂອງພຣະອົງນັ້ນເທີ້ນ. ອາແມນ ຄຸນພໍ່ ອັງຕວນ ກຽດຕິສັກ